**ມິຊຊາອາທິດທີ 3 ກຳນົດທຳມະດາ ປີ C**

**ວັນທີ 27 ມັງກອນ 2019**



**ພຣະວໍລະສານໂດຍນັກບຸນລູກາ 1, 1-4; 4, 14-21**

ຍ້ອນວ່າມີຫລາຍຄົນໄດ້ພະຍາຍາມລຽບລຽງເຫດການທີ່ໄດ້ອຸບັດຂຶ້ນຢູ່ກາງພວກເຮົາ ຕາມຄຳບອກເລົ່າຂອງຜູ້ທີ່ເປັນພິຍານຮູ້ເຫັນດ້ວຍຕາແຕ່ຕົ້ນມາ, ແລະພາຍຫລັງກໍໄດ້ກາຍເປັນຜູ້ປະກາດພຣະໂອວາດ.

ດັ່ງນັ້ນ, ເທໂອຟິນທີ່ຮັກ, ເມື່ອໄດ້ສອບສວນເລື່ອງລາວຢ່າງລະອຽດແຕ່ຕົ້ນຈົນປາຍແລ້ວ, ຂ້າພະເຈົ້າຈຶ່ງເຫັນວ່າເປັນການສົມຄວນທີ່ຈະຮວບຮວມເລື່ອງລາວເຫລົ່ານີ້ຕາມລຳດັບມາສະເໜີທ່ານ ເພື່ອທ່ານຈະໄດ້ຮູ້ຈັກຄັກແນ່ເຖິງຄຳສອນທີ່ທ່ານໄດ້ຮັບມາແລ້ວ.

ໃນເວລານັ້ນ, ພຣະເຢຊູເຈົ້າສະເດັດກັບຄືນເມືອແຂວງກາລີເລ ພ້ອມດ້ວຍລິດທານຸພາບຂອງພຣະຈິດເຈົ້າ. ແລະຊື່ສຽງຂອງພຣະອົງກໍສ່າລືໄປທົ່ວເຂດແຂວງນັ້ນ. ພຣະອົງຊົງເທດສະໜາສັ່ງສອນໃນໂຮງທັມຕ່າງໆຂອງພວກເຂົາ, ແລະຄົນທັງຫລາຍກໍສັນລະເສີນເຍີນຍໍພຣະອົງ. ແລ້ວພຣະເຢຊູເຈົ້າກໍສະເດັດມາບ້ານນາຊາແລັດບ່ອນພຣະອົງໄດ້ຈຳເລີນຊີວິດຢູ່ແຕ່ນ້ອຍຈົນໃຫຍ່. ພໍເຖິງວັນເສົາ, ພຣະອົງກໍສະເດັດເຂົ້າໄປໃນໂຮງທັມຕາມປະເພນີແລະຊົງຢືນຂຶ້ນເພື່ອອ່ານພຣະຄຳພີ.

ເຂົາຍື່ນໜັງສືຂອງປະພາສົກອີຊາຢາໃຫ້ກັບພຣະອົງ. ເມື່ອມາຍອອກ, ພຣະອົງກໍພົບຕອນທີ່ຂຽນວ່າ: ພຣະຈິດຂອງພຣະອົງເຈົ້າສະຖິດຢູ່ເໜືອຂ້າພະເຈົ້າ ຍ້ອນພຣະອົງໄດ້ສະເລີມຂ້າພະເຈົ້າ. ພຣະອົງໄດ້ສົ່ງຂ້າພະເຈົ້າໄປປ່າວຂ່າວປະເສີດແກ່ຄົນທຸກຈົນ, ປະກາດອະໄພໂທດແກ່ພວກຖືກຄຸມຂັງ ແລະຊ່ວຍຄົນຕາບອດໃຫ້ເຫັນຮຸ່ງ, ຊ່ວຍຜູ້ຖືກກົດຂີ່ຂົ່ມເຫັງໃຫ້ໄດ້ຮັບເສລີພາບ, ປະກາດປີແຫ່ງພຣະເມດຕາກາລຸນາຂອງພຣະເຈົ້າ.

ພຣະອົງຊົງມ້ວນໜັງສືສົ່ງຄືນໃຫ້ຄົນໃຊ້ແລ້ວຊົງນັ່ງລົງ. ຄົນທັງຫລາຍໃນໂຮງທັມຈ້ອງຕາເບິ່ງພຣະອົງ. ພຣະອົງຈຶ່ງຕັ້ງຕົ້ນກ່າວແກ່ພວກເຂົາວ່າ: ພຣະຄຳພີຕອນທີ່ພວກທ່ານໄດ້ຍິນກັບຫູຂອງພວກທ່ານເອງນັ້ນ ສຳເລັດລົງແລ້ວໃນມື້ນີ້ເອງ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 1, 1-4; 4, 14-21**

ເຖິງວ່າພວກເຮົາຈະກ້າວເຂົ້າສູ່ເດືອນທຳອິດຂອງປີໃໝ່ສາກົນແລ້ວກໍຕາມ, ແຕ່ບັນຍາກາດຂອງງານບຸນພຣະເຈົ້າບັງເກີດກໍຍັງຢູ່ໃນດວງໃຈແລະຄວາມຊົງຈຳຂອງພວກເຮົາ. ຍ້ອນບໍ່ແມ່ນງານບຸນວັນເກີດຂອງຄົນທົ່ວໄປ ແຕ່ແມ່ນພຣະບຸດຂອງພຣະເຈົ້າ, ພຣະວາຈາຂອງພຣະເຈົ້າທີ່ລົງມາເກີດເປັນມະນຸດເໝືອນກັບພວກເຮົາ. ເພາະສະນັ້ນງານສະຫລອງນີ້ຈຶ່ງສຳຄັນແລະຍິ່ງໃຫຍ່ສຳລັບພວກເຮົາ. ແນ່ນອນ, ພຣະເຢຊູເຈົ້າມາໃນໂລກນີ້ບໍ່ແມ່ນເພື່ອຕັດສິນໂລກ ແຕ່ເພື່ອຊ່ວຍໂລກໃຫ້ຮອດ. ພຣະອົງຊ່ວຍພວກເຮົາຢ່າງໃດ? ພາລະກິດການກູ້ໄຖ່ຂອງພຣະອົງແມ່ນຫຍັງ? ວາຈາຂອງພຣະເຈົ້າໃນວັນອາທິດນີ້ໄດ້ອະທິບາຍໃຫ້ພວກເຮົາເຫັນເຖິງພາລະກິດການກູ້ໄຖ່ຂອງພຣະເຢຊູຊາວນາຊາແລັດ. ສິ່ງທຳອິດທີ່ພຣະເຢຊູເຈົ້າກະທຳໃນວັນພຣະນັ້ນຄືການປະກາດຂ່າວດີຂອງພຣະເຈົ້າໃນໂຮງທັມ. ແລະເນື້ອຫາຂອງຂ່າວດີນີ້ໄດ້ສຳເລັດລົງໃນຕົວຂອງພຣະເຢຊູເຈົ້າໃນວັນນີ້ເອງ. ຍ້ອນຫຍັງ? ຍ້ອນສິ່ງທີ່ຂ່າວດີກ່າວມານັ້ນລ້ວນແຕ່ແມ່ນພາລະກິດທີ່ພຣະເຢຊູເຈົ້າໄດ້ກະທຳຕະຫລອດເວລາທີ່ພຣະອົງຢູ່ໃນໂລກນີ້ເຊັ່ນ: ປະກາດຂ່າວປະເສີດແກ່ຄົນທຸກຈົນ, ປະກາດອະໄພໂທດແກ່ພວກຖືກຄຸມຂັງ ແລະຊ່ວຍຄົນຕາບອດໃຫ້ເຫັນຮຸ່ງ, ຊ່ວຍຜູ້ຖືກກົດຂີ່ຂົ່ມເຫັງໃຫ້ໄດ້ຮັບເສລີພາບ, ປະກາດປີແຫ່ງພຣະເມດຕາກາລຸນາຂອງພຣະເຈົ້າ. ສິ່ງນີ້ທຳໃຫ້ພວກເຮົາເຫັນວ່າ: ສິ່ງທີ່ພຣະເຢຊູເຈົ້າປະກາດແລະສິ່ງທີ່ພຣະອົງກະທຳນັ້ນເປັນອັນໜຶ່ງອັນດຽວກັນ. ຍ້ອນພຣະອົງແມ່ນພຣະວາຈານາດ, ວາຈາຂອງພຣະເຈົ້ານັ້ນເອງ. ແລະພຣະວາຈານີ້ໄດ້ສຳເລັດລົງດ້ວຍອາໄສການຕາຍແລະການກັບຄືນຊີບຂອງພຣະເຢຊູກຣິສໂຕເຈົ້າ.

ສິ່ງທີ່ກ່າວມາຂ້າງເທິງນີ້ມີຄວາມກ່ຽວຄ້ອງກັບພວກເຮົາຜູ້ເປັນລູກຂອງພຣະເຈົ້າຢ່າງໃດ? ແລະຢາກສອນພວກເຮົາຫຍັງ? ສິ່ງທຳອິດທີ່ວາຈາຂອງພຣະເຈົ້າຢາກບອກສອນພວກເຮົາອາດຈະແມ່ນຄວາມຜູກພັນໃກ້ຊິດລະຫວ່າງພວກເຮົາກັບວາຈາຂອງພຣະເຈົ້າ. ພວກເຮົາໄດ້ໃຫ້ເວລາກັບພຣະເຈົ້າດ້ວຍການອ່ານວາຈາຂອງພຣະອົງບໍ? ພວກເຮົາໄດ້ໃຫ້ພຣະເຢຊູເຈົ້າບອກສອນພວກເຮົາຜ່ານທາງວາຈາຂອງພຣະອົງບໍ?

ສິ່ງທີສອງທີ່ວາຈາຂອງພຣະເຈົ້າໃນວັນນີ້ຢາກບອກເຕືອນພວກເຮົາຄື: ພວກເຮົາໄດ້ທຳໜ້າທີ່ຜູ້ປະກາດຂ່າວດີຂອງພຣະເຈົ້າໃນຊີວິດກຣິສຕັງຂອງພວກເຮົາບໍ? ພວກເຮົາໄດ້ເປັນພິຍານເຖິງສິ່ງທີ່ພວກເຮົາປະກາດບໍ? ສິ່ງທີ່ພວກເຮົາປະກາດແລະສິ່ງທີ່ພວກເຮົາປະຕິບັດໄດ້ໄປພ້ອມກັນບໍ?

ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ສ່ອງສະວ່າງໃຫ້ພວກເຮົາເຂົ້າໃຈເຖິງພາລະກິດຂອງພຣະເຢຊູເຈົ້າແລະວຽກງານຂອງພວກເຮົາຜູ້ເປັນລູກຂອງພຣະອົງໃນຊີວິດປະຈຳວັນຂອງພວກເຮົາ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ